ໂຮງຮຽນຫຼວງ ຮັດ NSW – ນຳພາລ້ຳໜ້າສເມີ

Time to start school

Family guide to starting Kindergarten

# ເວລາເລີ້ມເຂົ້າໂຮງຮຽນ

## ຄຳແນະນຳສຳລັບຄອບຄົວໃນການເລີ້ມເຂົ້າ Kindergarten







NEW SOUTH WALES
DEPARTMENT
OF EDUCATION
AND TRAINING



# ຍິນດີຕ້ອນຮັບສູ່ໂຮງຮຽນ

ເວລາເລີ້ມເຂົ້າໂຮງຮຽນ

## ທ່ານຈະພົບເຫັນ ຫຍັງແດ່ຢູ່ຂ້າງໃນ


ການເລີ້ມເຂົ້າໂຮງຮຽນແບບນິ້ມນວນ 2

ການຮຽນຂອງລູກທ່ານ 6

ຊີວິດຢູ່ໃນໂຮງຮຽນ 8

ເທັກໂນໂລຢີ ຢູ່ໃນໂຮງຮຽນ 11

ບັນຊີກວດການກຽມພ້ອມສໍາລັບໂຮງຮຽນ 12

*ນິຕຍະສານພໍ່ແມ່ແລະໂຮງຮຽນ* 14

*ແຟ້ມປະຈໍາມື້ຂອງໂຮງຮຽນ* 15

ຫ້ອງ **Kindergarten** 16

ການທ່ອງໃຍນັກຮຽນ 18

ເຮັດວຽກຮ່ວມກັນເປັນທີມ

– ລູກທ່ານ, ທ່ານເອງ ແລະ ໂຮງຮຽນ 20

ໄປຮຽນໜັງສືໂດຍມີສຸຂພາບແຂງແຮງ 22

ຂໍ້ມູນທີ່ມີປໂຍດ 26



# ການເລີ້ມເຂົ້າໂຮງຮຽນແບບນີ້ມນວນ

ກຽມຕົວໃຫ້ພ້ອມຢູ່ໃນເຮືອນກ່ອນໂຮງຮຽນຈະເລີ້ມ ຈະເປັນການຊ່ວຍທ່ານແລະລູກຂອງທ່ານໃຫ້ມີຄວາມ ໝັ້ນໃຈແລະຕື່ນເຕັ້ນໃນການເລີ້ມເຂົ້າໂຮງຮຽນ.



## ການກະກຽມຕົວກັບລູກທ່ານສຳລັບ ໂຮງຮຽນ

ຂນະນີ້ກໍໃກ້ຈະເຖິງເວລາແລ້ວ - ລູກທ່ານພອມຈະເລີ້ມມື້ທຳອິດຂອງປະສົບການອັນໃໝ່ແລະໜ້າຕື່ນເຕັ້ນ. ທ່ານຄົງຈະບໍ່ແນ່ໃຈວ່າຈະເລີ້ມຈາກໃສໃນການກະກຽມລູກທ່ານໃຫ້ພ້ອມ.

ພວກເຮົາຮັບຮູ້ວ່າມັນເປັນບາດກ້າວອັນສຳຄັນສຳລັບທຸກໆຄົນ. ການສ້າງຄວາມສຳພັນອັນດີກັບທ່ານເພື່ອຊ່ວຍອູ້ມຊູການ ຮຽນຂອງລູກທ່ານ ເປັນສິ່ງສຳຄັນສຳລັບພວກເຮົາ. ຄນະທີມງານຂອງນາຍຄຣູທີ່ມີຄຸນວຸດທິສູງ ພ້ອມທັງພະນັກງານອູ້ມຊູຂອງພວກເຮົາຈະຢູ່ໃນໂຮງຮຽນເພື່ອ ຊ່ວຍໃຫ້ລູກທ່ານມີ ການເລີ້ມທີ່ດີທີ່ສຸດເທົ່າທີ່ຈະດີໄດ້.

ເມື່ອຕິດຕໍ່ກັບໂຮງຮຽນຄັ້ງທຳອິດນັ້ນ ທ່ານອາດຈະໄດ້ພົບບັນດາພະນັກງານບໍຣິຫານຂອງໂຮງຮຽນ. ພວກເຂົາເປັນຜູ້ທີ່ມີຄວາມເປັນກັນເອງທີ່ຢູ່ ໃນຫ້ອງການ ຂອງໂຮງຮຽນ. ພວກເຂົາຈະຊ່ວຍທ່ານດ້ວຍການໃຫ້ຄຳແນະນຳໃນຂໍ້ມູນຕ່າງໆທົ່ວໄປທີ່ທ່ານອາດຈະຕ້ອງການ. ນອກຈາກນີ້ແລ້ວ ພວກເຂົາ ຍັງຈະທຳການນັດພົບສຳລັບທ່ານກັບທ່ານຄຣູໃຫຍ່ ນາຍຄຣູ ຫຼື ພະນັກງານອື່ນໆຂອງໂຮງຮຽນຖ້າທ່ານຕ້ອງການເວົ້າລົມ ກັບໃຜຜູ້ນຶ່ງ.





### ການກະກຽມຕົວຢູ່ເຮືອນ

ມີຫຼາຍສິ່ງຫຼາຍຢ່າງທີ່ຕ້ອງກະກຽມ, ວາງງົບປະມານ ແລະ ແຜນການກ່ອນທີ່ໂຮງຮຽນຈະເລີ້ມ.

### ງົບປະມານ

ການເລີ້ມເຂົາໂຮງຮຽນພົວພັນກັບການໃຊ້ຈ່າຍໃໝ່ເຊັ່ນ ການຊື້ຊຸດນັກຮຽນແລະເກີບໃສ່ໄປໂຮງຮຽນ ດັ່ງນັ້ນຈະເປັນການດີໃນການ ວາງງົບປະມານລ່ວງໜ້າ ສຳລັບສິ່ງເຫຼົ່ານີ້. ຖ້າທ່ານຕ້ອງການຝາກລູກທ່ານກັບບໍຣິການດູແລຫຼັງໂມງເຂົ້າຮຽນ ລາຍຈ່າຍເຫຼົ່ານີ້ກໍຄວນຖືກຄິດໄລ່ເຂົ້າໃສ່ງົບປະມານນັ້ນນຳ.

### ຊຸດນັກຮຽນ

ໂຮງຮຽນຂອງລູກທ່ານຈະບອກທ່ານກ່ຽວກັບຊຸດນັກຮຽນແລະບ່ອນຊື້. ໝວກກໍເປັນສ່ວນນຶ່ງຂອງຊຸດນັກຮຽນເພື່ອເປັນການປ້ອງກັນແສງແດດ. ຕາມປົກກະຕິແລ້ວຈະມີຊຸດນັກຮຽນສຳລັບລະດູຮ້ອນ ລະດູໜາວ ແລະ ຊຸດກິລາ. ທາງໂຮງຮຽນສາມາດບອກທ່ານວ່າຮ້ານຄ້າໃດຂາຍ ຊຸດນັກຮຽນ ຫຼື ຊື້ຜ້າແບບໃດເພື່ອຕັດຫຍິບເອົາເອງ.

ເພື່ອຕັດຄ່າໃຊ້ຈ່າຍລົງ ຫຼາຍໂຮງຮຽນມີການຂາຍຊຸດນັກຮຽນທີ່ໄດ້ຮັບການບໍຣິຈາກ ຈາກບັນດານັກຮຽນຫຼັງຈາກທີ່ພວກເຂົາໃສ່ບໍ່ໄດ້ແລ້ວ.

ຖ້າທ່ານຍັງບໍ່ທັນໄດ້ຈົດຊື່ລູກທ່ານເຂົ້າໂຮງຮຽນ ກະຣຸນາໄປທີ່ໂຮງຮຽນເພື່ອຈົດຊື່ລູກທ່ານເຂົ້າຮຽນ ແລະ ຖ້າຫາກລູກທ່ານມີຄວາມຕ້ອງການພິເສດ ຫຼື ມີອາການແພ້ໃດໆ ມັນເປັນສິ່ງສຳຄັນທີ່ທ່ານຕ້ອງແຈ້ງໃຫ້ທ່ານຄຣູໃຫຍ່ຊາບ.

### ການບໍລິຈາກເງິນ

ໂຮງຮຽນຈະຂໍໃຫ້ທ່ານບໍລິຈາກເງິນດ້ວຍຄວາມສມັກໃຈເພື່ອຍົກລະດັບໂຄງການການຮຽນແລະການກິລາໃຫ້ດີຂຶ້ນ. ທ່ານອາດຈະຖືກຂໍຮ້ອງໃຫ້ຈ່າຍຄ່າໄປທັສນະສຶກສາຕລອດປີເພື່ອຍົກລະດັບການຮຽນໃນຫ້ອງຮຽນຂອງລູກທ່ານໃຫ້ດີຂຶ້ນ ແລະ ຖ້າລູກທ່ານຫາກເຂົ້າຮ່ວມໃນກິຈກັມໃດນຶ່ງເພີ້ມຕື່ມ ເຊັ່ນ ການກິລາ ຫຼື ໃນຄະນະດົນຕຣີ ທ່ານກໍອາດຈະຖືກຂໍໃຫ້ເສັຍຄ່າເຊົ່າເຄື່ອງຫຼິ້ນດົນຕຣີ ແລະ ຄ່າເດີນທາງໄປຮ່ວມການສະແດງຕ່າງໆ.

### ການຊ່ວຍເຫຼືອດ້ານການເງິນ

ຖ້າທ່ານມີຄວາມລຳບາກໃນຄ່າໃຊ້ຈ່າຍກ່ຽວກັບໂຮງຮຽນ ກະຣຸນາເຮັດການນັດໝາຍພົບທ່ານຄຣູໃຫຍ່ເພື່ອປຶກສາຫາລືເລື້ອງນີ້. ໂຄງການຊ່ວຍເຫຼືອນັກຮຽນ (Student Assistance Scheme) ທີ່ມີໄວ້ອາດຈະສາມາດຊ່ວຍທ່ານໄດ້.

### ເງິນຄ່າການສຶກສາອາດໄດ້ຄືນຈາກພາສີລາຍໄດ້

ຄ່າໃຊ້ຈ່າຍໃນການສຶກສາບາງຢ່າງອາດຈະສາມາດໄດ້ຄືນຈາກການເສັຍພາສີລາຍໄດ້. ເພື່ອເອົາຂໍ້ມູນເພີ້ມຕື່ມ ຈົ່ງເປີດເຂົ້າເບິ່ງ

**www.ato.gov.au**







### ການເດີນທາງໄປ ແລະ ມາ ຈາກໂຮງຮຽນ

ລູກທ່ານອາດຈະມີສິດໃນການຊ່ວຍເຫຼືອໃນການເດີນທາງ ໂດຍຜ່ານ ໂຄງການການເດີນທາງໄປໂຮງຮຽນຂອງນັກຮຽນ (School Student Transport Scheme). ໂຄງການນີ້ຈະຊ່ວຍເຫຼືອໃນການເດີນທາງຕາມທາງຣົດໄຟ, ຣົດບັສ, ເຮືອ ແລະ ຣົດໂຄສທາງໄກ. ຢູ່ຕາມເຂດທີ່ບໍ່ມີການຂົນສົ່ງຂອງຣັຖບານ ກໍຈະມີການຊ່ວຍໃນການຂົນສົ່ງເດີນທາງໄປແລະມາຈາກໂຮງຮຽນໂດຍຣົດສ່ວນຕົວອີກດ້ວຍ.

**ໂທຣະສັບ ຫາ: 1800 227 774**
**ຫຼື (02) 9891 8900**
**www.transport.nsw.gov.au**

### ການດູແລນອກຊົ່ວໂມງຮຽນ

ບັນດາບໍຣິການຕ່າງໆທີ່ດູແລເດັກນອກຊົ່ວໂມງຮຽນ (Outside of School Hours – OOSH) ສ່ວນຫຼາຍແມ່ນມີຢູ່ໃນໂຮງຮຽນ ຫຼື ຢູ່ໃກ້ໂຮງຮຽນ. ໂຮງຮຽນທ່ານສາມາດໃຫ້ຂໍ້ມູນກ່ຽວກັບບັນດາບໍຣິການນີ້ທີ່ຢູ່ໃນເຂດຂອງທ່ານໄດ້. ບໍຣິການເຫຼົ່ານີ້ຄິດຄ່າດູແລ ແລະ ທ່ານອາດຈະມີສິດໄດ້ຮັບເງິນຊ່ວຍການດູແລເດັກ (Child Care Benefit) ເພື່ອຊ່ວຍທ່ານໃນຄ່າດູແລເດັກນີ້.

**ໂທຣະສັບ ຫາ:Centrelink 136 150**
**www.centrelink.gov.au**




## ຂຽນຊື່ລູກທ່ານໃສ່ຂອງໝົດທຸກຢ່າງ

ທ່ານສາມາດ:

- ໃຊ້ປາກກາສຳລັບຂຽນໝາຍເຄື່ອງຊັກເພື່ອຂຽນປ້າຍໃສ່ເຄື່ອງນຸ່ງ ໝວກແລະເກີບ ຫຼື ຫຍິບ ຫຼື ລີດ ປ້າຍຊື່ໃສ່
- ກວດເບິ່ງວ່າປ້າຍເຫຼົ່ານັ້ນບໍ່ໄດ້ຕົກສີໄປກັບການຊັກເຄື່ອງນຸ່ງ
- ກວດເບິ່ງກະເປົ໋າກັບລູກທ່ານທຸກໆຄືນ
- ທຸກໆໂຮງຮຽນຈະມີບ່ອນເກັບສິ່ງຂອງທີ່ເດັກເຮັດເສັຍ ຈົ່ງສອບຖາມຢູ່ທີ່ຫ້ອງການຖ້າຫາກວ່າລູກທ່ານບໍ່ເອົາສິ່ງຂອງໃດນຶ່ງກັບມາເຮືອນຄືນ.



# ການຮຽນຂອງລູກທ່ານ

ບໍ່ມີທັກສະພິເສດສະເພາະໃດໆທີ່ເດັກຈະຕ້ອງມີກ່ອນທີ່ຈະເລີ້ມເຂົ້າ Kindergarten – ພວກເຂົາບໍ່ໄດ້ຖືກຄາດຫວັງວ່າຈະຕ້ອງຮູ້ຈັກຂຽນຫຼືອ່ານໄດ້ກ່ອນ. ສິ່ງສຳຄັນແມ່ນວ່າ ທັງທ່ານ ແລະລູກຂອງທ່ານຮູ້ສຶກໝັ້ນໃຈໃນການເລີ້ມເຂົ້າໂຮງຮຽນ.

## ບັນດາກິຈກັມຕ່າງໆທີ່ຄວນທົດລອງກັບລູກທ່ານກ່ອນການເລີ້ມເຂົ້າໂຮງຮຽນ

ກິຈກັມເຫຼົ່ານີ້ແມ່ນສິ່ງທີ່ຖືກແນະນຳໃຫ້ເຮັດກັບບັນດາເດັກນ້ອຍກ່ອນທີ່ພວກເຂົາຈະເລີ້ມເຂົ້າໂຮງຮຽນເພື່ອຈະຊ່ອຍເຮັດໃຫ້ການເຂົ້າໂຮງຮຽນເປັນສິ່ງງ່າຍຂຶ້ນສຳລັບພວກເຂົາ.

**ທັກສະດ້ານພາສາ**

- ຮ້ອງເພງນຳກັນ
- ເວົ້າເລື້ອງຊວນຫົວ ແລະ  ຄຳສຳພັດກັນໃຫ້ກັນຟັງ
- ໃຫ້ຄຳແນະນຳງ່າຍໆເພື່ອໃຫ້ລູກທ່ານເຮັດຕາມ ເຊັ່ນ ຄວນເກັບມ້ຽນກະເປົ໋າແນວໃດ
- ນຳໃຊ້ປຶ້ມອ່ານສຳລັບຄວາມມ່ວນຊື່ນ ເຊັ່ນເບິ່ງຮູບປະກອບ
- ຈຳແນກບັນດາຮູບຕ່າງໆຢູ່ໃນປຶ້ມອ່ານ, ນິຕຍະສານ, ໂທຣະທັດ ຫຼື ອິນເຕີຣ໌ເນັດ
- ຊຸກຍູ້ລູກທ່ານໃຫ້ເຂົ້າຮ່ວມໃນການສົນທະນາ.

**ທັກສະດ້ານການຂຽນ**

- ເອົາສໍດຳ ມາກເກີ ສໍສີ ຟອຍທາສີ ແລະ ກ້ານໄມ້ສຽບໃສ່ຢູ່ໃນດິນຊາຍ ເພື່ອແຕ້ມຮູບ ຂີດຫຼິ້ນ ຫຼື ຂຽນ
- ຂຽນຕົວເລກ ແລະ ຕົວໜັງສື
- ຊຸກຍູ້ລູກທ່ານໃຫ້ຂຽນຕົວພິມເພື່ອເລີ້ມຂຽນຊື່ຂອງເຂົາ ເຊັ່ນ Jack.

**ທັກສະດ້ານເລກ**

- ຊຸກຍູ້ລູກທ່ານໃຫ້ຈື່ຕົວເລກໂດຍໃຊ້ຄຳເວົ້າ ເຊັ່ນ ຫຼາຍຢ່າງ, ຫຼາຍ, ຫຼາຍກວ່າ, ໜ້ອຍກວ່າ
- ຊ່ວຍລູກທ່ານຊອກຫາສິ່ງທີ່ບໍ່ຄືກັນຢູ່ໃນກຸ່ມ ເຊັ່ນ ຮູບຮ່າງບໍ່ຄືກັນ
- ເວົ້າເຖິງສິ່ງກົງກັນຂ້າມ - ຂຶ້ນແລະລົງ, ຂ້າງລຸ່ມຂ້າງເທິງ, ຂ້າງໜ້າແລະຂ້າງຫຼັງ, ກາງຄືນແລະກາງເວັນ.

**ທັກສະດ້ານສ່ວນຕົວ/ສັງຄົມ**

- ຈັດເວລາສຳລັບລູກທ່ານໃຫ້ໄດ້ຫຼິ້ນກັບເດັກຄົນອື່ນໆເພື່ອວ່າພວກເຂົາຈະໄດ້ຮຽນຮູ້ໃນການແບ່ງປັນແລະປ່ຽນຜຽນກັນ
- ຊຸກຍູ້ໃຫ້ລູກທ່ານຮູ້ຈັກເກັບມ້ຽນຫຼັງຈາກຫຼິ້ນແລ້ວ
- ຊ່ວຍລູກທ່ານໃຫ້ຮຽນເວົ້າຊື່ພວກເຂົາແບບເຕັມພ້ອມທັງທີ່ຢູ່ນຳ
- ເຮັດໃຫ້ລູກທ່ານເຂົ້າໃຈໃນກົດລະບຽບແລະເຫດຜົນທີ່ຕ້ອງມີກົດລະບຽບນັ້ນ.

**ທັກສະທາງດ້ານຮ່າງກາຍ**

- ໃຫ້ຝຶກໃຊ້ມີດຕັດ
- ໃຫ້ໂອກາດໃນການຫຼິ້ນກັບບູອັກໄມ້ແລະເກມທົດສອບປັນຍາ (puzzles)
- ຫຼິ້ນເກມແບບເຕັ້ນ ແລະເຕັ້ນຂ້າມ.

## ສືບຕໍ່ການຫຼິ້ນ

ການຫຼິ້ນເປັນນຶ່ງໃນສິ່ງຕ້ອງທີ່ສຳຄັນທີ່ສຸດທີ່ບັນດາເດັກນ້ອຍມີ ແລະ ສິ່ງນີ້ກໍຈະບໍ່ປ່ຽນແປງໃນເມື່ອພວກເຂົາເຂົ້າ Kindergarten ແລ້ວກໍຕາມ. ການຫຼິ້ນຈະເຮັດໃຫ້ການພັດທະນາທຸກໆຢ່າງຂອງເດັກໃຫ້ດີຂຶ້ນ.

ພວກບັນດາເດັກນ້ອຍຫຼິ້ນຍ້ອນວ່າມັນມ່ວນ ແຕ່ວ່າ ໃນຂະນະທີ່ພວກເຂົາຫຼິ້ນນັ້ນພວກເຂົາກໍຮຽນຮູ້ໄປນຳ. ໃນເວລາທີ່ພວກເດັກນ້ອຍຫຼິ້ນນັ້ນພວກເຂົາໃຊ້ຕົນຕົວຂອງພວກເຂົາ ໃຊ້ການຄິດຈິນຕະນາການ ແລະ ຮຽນຮູ້ການສື່ສານ ແລະ ການຮ່ວມມື. ພວກເຂົາຮຽນຮູ້ວ່າສິ່ງຂອງຕ່າງໆທຳງານແບບໃດ ແລະ ຮຽນຮູ້ການຄວບຄຸມອາຣົມ. ຈົ່ງປ່ອຍໃຫ້ລູກມີເວລາທີ່ບໍ່ຕ້ອງຢູ່ພາຍໃຕ້ລະບຽບຫຼັງຈາກໂຮງຮຽນເລີກໃນແຕ່ລະມື້ ເພື່ອໃຫ້ລູກທ່ານພັກຜ່ອນ ແລະຫຼິ້ນ.



# ຊີວິດຢູ່ໃນໂຮງຮຽນ

ແຕ່ລະໂຮງຮຽນຈະມີເວລາເຂົ້າແລະເວລາເລີກຂອງເຂົາເອງ ແຕ່ວ່າ ໂດຍທົ່ວໄປແລ້ວ ໂຮງຮຽນຈະເລີ້ມເວລາ 9ໂມງເຊົ້າ ແລະ ເລີກປະມານ 3 ໂມງບ່າຍ ຈາກວັນຈັນ ຫາ ວັນສຸກ. ບັນດານັກຮຽນຈະມີເວລາພັກຫຼິ້ນ ແລະ ພັກກິນເຂົ້າ.

ໂຮງຮຽນອາດຈະເລີ້ມ ແລະ ເລີກດ້ວຍການມາຮວມຊຸມນຸມກັນ ຊຶ່ງພວກນັກຮຽນຈະໄດ້ຟັງການປະກາດຂອງທ່ານຄຣູໃຫຍ່ ນາຍຄຣູ ຫຼື ຜູ້ນຳຂອງນັກຮຽນ.

## ໂຮງຮຽນເປັນສິ່ງບັງຄັບ

ກົດໝາຍໄດ້ລະບູໄວ້ວ່າ ເດັກທຸກໆຄົນທີ່ມີອາຍຸໃນເກນບັງຄັບໃຫ້ເຂົ້າໂຮງຮຽນຕ້ອງໄປໂຮງຮຽນ. ໃນເວລາທີ່ພວກເດັກຂາດໂຮງຮຽນ ພວກເຂົາກໍຈະຂາດຂໍ້ມູນອັນສຳຄັນ ລະບຽບການຮຽນຂອງພວກເຂົາກໍຂາດຕອນ ແລະ ພວກເຂົາກໍຂາດຄວາມເຊື່ອໝັ້ນ. ນອກນີ້ ພວກເຂົາຍັງຈະຂາດການສ້າງ ມິຕພາບອີກດ້ວຍ. ທຸກໆປັດໃຈເຫຼົ່ານີ້ສາມາດກະທົບກະເທືອນຄວາມນຶກຄິດຂອງພວກເຂົາທີ່ມີຕໍ່ໂຮງຮຽນແລະຄວາມສຳເຣັດຂອງພວກເຂົາອີກດ້ວຍ.

### ຖ້າລູກທ່ານໄປໂຮງຮຽນຊ້າ ຫຼື ຂາດໂຮງຮຽນ

ຖ້າລູກທ່ານໄປໂຮງຮຽນຊ້າ ທ່ານຈະຕ້ອງໄປເຊັນເອົາພວກເຂົາເຂົ້າຫ້ອງຢູ່ທີ່ຫ້ອງການ; ອັນນີ້ກໍເປັນວິທີປະຕິບັດອັນດຽວກັນກັບການເອົາລູກທ່ານອອກຈາກຫ້ອງຮຽນໄວບໍ່ວ່າດ້ວຍເຫດຜົນໃດ.

ຖ້າລູກທ່ານຂາດໂຮງຮຽນ ທ່ານຈະຕ້ອງໃຫ້ຄຳອະທິບາຍວ່າເປັນຫຍັງພວກເຂົາຈຶ່ງຂາດ. ທັມມະດາແລ້ວແມ່ນຂຽນຈົດໝາຍນ້ອຍອະທິບາຍເຫດຜົນທີ່ພວກເຂົາຕ້ອງຂາດໂຮງຮຽນ ແລະລູກທ່ານສາມາດເອົາໃຫ້ນາຍຄຣູເມື່ອເວລາພວກເຂົາກັບມາໂຮງຮຽນ. ຫຼືອາດຈະໂທຣະສັບໄປຫາໂຮງຮຽນກໍໄດ້.

### ມາຮັບລູກທ່ານຕອນໂຮງຮຽນເລີກ

ທຸກໆມື້ ໃນເວລາໂຮງຮຽນເລີກຫ້ອງຮຽນຂອງລູກທ່ານຈະຊຸມນຸມກັນຢູ່ບ່ອນທີ່ເຄີຍຊຸມເປັນປະຈຳ. ນາຍຄຣູຂອງເດັກນ້ອຍຈະລໍຖ້າຢູ່ກັບພວກເຂົາ. ໃຫ້ແນ່ໃຈວ່າເດັກນ້ອຍແລະນາຍຄຣູພວກເຂົາຮູ້ວ່າໃຜຈະເປັນຜູ້ມາຮັບເດັກທຸກໆແລງ. ບັນດາພວກເດັກນ້ອຍອາດຈະເສັຍໃຈຖ້າທ່ານຫຼືຜູ້ອື່ນມາຮັບພວກເຂົາຊ້າ. ຈົ່ງກວດເບິ່ງກັບນາຍຄຣູຂອງພວກເຂົາວ່າເວລາໃດຈຶ່ງເປັນເວລາດີທີ່ສຸດທີ່ຈະມາຮັບໃນຕອນບ່າຍ.

### ຮັກສາຄວາມເປັນລະບຽບໄວ້

ບັນດາເດັກ Kindergarten ຈະເມື່ອຍຫຼາຍໃນເວລາກາງຄືນເພາະວ່າພວກເຂົາເຮັດຫຼາຍສິ່ງຢ່າງທີ່ໃໝ່ແລະຕື່ນເຕັ້ນ. ດ້ວຍເຫດນີ້ມັນຈະເປັນການຊ່ວຍໄດ້ຖ້າທ່ານຮັກສາຄວາມເປັນລະບຽບໄວ້ ເຊັ່ນ ເວລາອາບນ້ຳ ເວລາອາຫານແລະເວລາອ່ານໜັງສືໃຫ້ສມ່ຳສເມີເທົ່າທີ່ຈະເປັນໄດ້. ການນອນຫຼັບດີໃນແຕ່ລະຄືນເປັນສິ່ງສຳຄັນ.



## ການຂຽນຈົດໝາຍນ້ອຍ

ຖ້າລູກທ່ານໄດ້ຂາດໂຮງຮຽນ ທ່ານສາມາດຂຽນຈົດໝາຍນ້ອຍດ້ວຍຂໍ້ມູນຕາມຂ້າງລຸ່ມນີ້:

- ຂຽນຊື່ແລະຫ້ອງຮຽນຂອງລູກທ່ານໃສ່
- ຮວມເອົາວັນທີ ແລະ ຈຳນວນວັນທີ່ລູກທ່ານຂາດໂຮງຮຽນໃສ່ນຳ
- ອະທິບາຍວ່າເປັນຫຍັງລູກທ່ານຈຶ່ງຂາດໂຮງຮຽນ
- ຮວມເອົາຂໍ້ມູນອື່ນໆໃສ່ນຳຖ້າຕ້ອງການ.

ຖ້າລູກທ່ານຈະຂາດໂຮງຮຽນຫຼາຍກວ່າສາມວັນ ກະຣຸນາແຈ້ງໃຫ້ຫ້ອງການຂອງໂຮງຮຽນຊາບ. ທ່ານກໍຍັງຕ້ອງຂຽນຈົດໝາຍໃນເວລາທີ່ລູກທ່ານກັບມາໂຮງຮຽນ.

ເພື່ອເອົາຕົວແບບຂອງຈົດໝາຍນ້ອຍ ແລະ ຂໍ້ມູນຕ່າງໆທີ່ແປເປັນ 34 ພາສາແລ້ວ ຈົ່ງເປີດເຂົ້າເບິ່ງ

***School Attendance***

**https://www.det.nsw.edu.au/languagesupport/documents/index_s.htm**

### ການໄປ ແລະ ມາຈາກໂຮງຮຽນ

ກະລຸນາຈື່ໄວ້ວ່າເພື່ອຈະຂ້າມທາງຢູ່ບ່ອນທາງຂ້າມຢູ່ໂຮງຮຽນ ຈົ່ງຈັບມືລູກທ່ານໄວ້. ບັນດາຖນົນໃກ້ໆໂຮງຮຽນນັ້ນຫຍຸ້ງຫຼາຍໃນເວລາຕອນເຊົ້າ ແລະ ຕອນບ່າຍ. ກະລຸນາຢ່າຢຸດ ຫຼືຈອດຣົດຂອງທ່ານຢູ່ບ່ອນທາງຂ້າມ ຫຼືຢູ່ໃກ້ ແລະ ຈົ່ງສັງເກດເບິ່ງປ້າຍຄວາມປອດໄພ ແລະ ປ້າຍຫ້າມຈອດ.

www.rta.nsw.gov.au

### ຜູ້ມີພອນສວັນ ແລະ ຄວາມສາມາດພິເສດ

ເດັກທີ່ມີພອນສວັນແລະຄວາມສາມາດພິເສດມີຄວາມອາດສາມາດເໜືອກວ່າຂັ້ນທັມມະດາໃນນຶ່ງຫຼືຫຼາຍຢ່າງໃນ ດ້ານ ສະຕິປັນຍາ, ການຄິດປະດິດສ້າງ, ສັງຄົມ ຫຼື ຄວາມສາມາດທາງຮ່າງກາຍ.
ຢູ່ໃນໂຮງຮຽນຫຼວງໃນຣັດ NSW ມີໂອກາດໃຫ້ເດັກທີ່ມີພອນສວັນແລະຄວາມສາມາດພິເສດຢູ່ທຸກໆໂຮງຮຽນ. ກະລຸນາຕິດຕໍ່ໂຮງຮຽນທ່ານເພື່ອຂໍໂອ້ລົມກັບທ່ານຄຣູໃຫຍ່ກ່ຽວກັບບັນດາໂຄງການຕ່າງໆທີ່ມີໄວ້ໃຫ້.

www.curriculumsupport.education.nsw.gov.au/policies/gats

### ນັກຮຽນທີ່ມີຄວາມຕ້ອງການພິເສດ

ຖ້າລູກທ່ານມີຄວາມພິການ ຫຼື ມີຄວາມຕ້ອງການພິເສດໃດໆ ກະລຸນາແຈ້ງໃຫ້ທ່ານຄຣູໃຫຍ່ຊາບຕັ້ງແຕ່ຕົ້ນໆເທົ່າທີ່ເຮັດໄດ້. ທາງ Department of Education and Training ມີບໍຣິການພິເສດຫຼາຍໆຢ່າງໄວ້ໃຫ້ເພື່ອຊ່ວຍອູ້ມຊູບັນດານັກຮຽນທີ່ມີຄວາມພິການ.

www.schools.nsw.edu.au/studentsupport/programs/disability.php

ບັນດານັກຮຽນທີ່ມີຄວາມລຳບາກໃນການຮຽນ ເຊັ່ນບັນດານັກຮຽນທີ່ມີຄວາມຫຍຸ້ງຍາກຫຼາຍໃນການຮຽນ, ມີຄວາມພິການດ້ານສະຕິປັນຍາແບບພໍປານກາງ ແລະ ຄວາມຜິດປົກກະຕິດ້ານປາກເວົ້າໄດ້ຮັບການຊ່ວຍເຫຼືອຜ່ານໂຄງການ ການຊ່ວຍເຫຼືອດ້ານການຮຽນ ຢູ່ກັບໂຮງຮຽນຂອງພວກເຂົາເອງ.

www.schools.nsw.edu.au/studentsupport/programs/lrngdifficulty.php



### ການລາຍງານ

ໃນແຕ່ລະປີ ທ່ານຈະໄດ້ຮັບການລາຍງານກ່ຽວກັບຄວາມກ້າວໜ້າການຮຽນຂອງລູກທ່ານຢ່າງໜ້ອຍສອງຄັ້ງ ຕາມປົກກະຕິແລ້ວຈະເປັນໃນຕອນທ້າຍຂອງເທີມ 2 ແລະ ເທີມ 4. ການສຳພາດລະຫວ່າງພໍ່ແມ່ - ນາຍຄຣູ ຈະອຳນວຍໂອກາດໃຫ້ທ່ານໄດ້ປຶກສາຫາລືກັບນາຍຄຣູໃນເລື້ອງຄວາມກ້າວໜ້າຂອງການຮຽນຂອງລູກທ່ານໃນການຈັດທີ່ເປັນທາງການ ແຕ່ວ່າຖ້າທ່ານມີຄວາມກັງວົນໃນຕລອດປີ ກໍຈົ່ງເຮັດການນັດໝາຍໄປພົບນາຍຄຣູເພື່ອປຶກສາຫາລືໄດ້.

ທ່ານສາມາດໄປພົບ, ໂທຣະສັບ ຫຼື ສົ່ງອີເມລ໌ ໄປຫາໂຮງຮຽນ ເພື່ອປຶກສາຫາລືບັນຫາໃດໆທີ່ທ່ານກັງວົນ. ນາຍພາສາກໍອາດຈະມີໄວ້ໃຫ້ຖ້າທ່ານຂໍ.




## ເທັກໂນໂລຢີ ຢູ່ໃນໂຮງຮຽນ

ຈົ່ງເຮັດໃຫ້ຕົວເອງທັນກັບເຫດການຢ່າງສມ່ຳສເມີກັບເທັກໂນໂລຢີທີ່ລູກທ່ານຈະໃຊ້ ຢູ່ໃນເຮືອນ ຢູ່ໂຮງຮຽນ ແລະ ບ່ອນອື່ນ.

ເພື່ອເອົາຂໍ້ມູນເພີ້ມຕື່ມ ກະລຸນາໄປເປີດເບິ່ງ:

**www.schools.nsw.edu.au/click**

# ບັນຊີກວດການກຽມພ້ອມສຳລັບໂຮງຮຽນ

ໝາຍ ຕິ໊ກວຽກແຕ່ລະອັນຫຼັງຈາກທີ່ໄດ້ເຮັດແລ້ວ (ບໍ່ແມ່ນວຽກທຸກຢ່າງຈະກ່ຽວກັບທ່ານ)

## ປີກ່ອນທີ່ລູກທ່ານຈະເລີ້ມເຂົ້າໂຮງຮຽນ

- ☐ ໄປຟັງການອະທິບາຍທິດທາງການຮຽນ ຫຼື ການປັ່ງນສະພາບ.
- ☐ ໃນເວລາຮອດການສັກຢາ ຈົ່ງຂໍໃຫ້ລູກທ່ານໄດ້ກວດການຟັງ ແລະ ກວດສາຍຕາ.
- ☐ ຖ້າລູກທ່ານມີອາການແພ້ ມີບັນຫາສຸຂະພາບ ຫຼື ມີຄວາມຕ້ອງການພິເສດໃດໆ ຈົ່ງແຈ້ງໃຫ້ທາງໂຮງຮຽນຊາບແຕ່ຕົ້ນເທົ່າທີ່ເປັນໄດ້ ແລະ ຈົ່ງເຮັດນັດໝາຍໄປພົບທ່ານຄຣູໃຫຍ່.
- ☐ ຂຽນຕື່ມໃບຟອມຂໍບັດເດີນທາງຖ້າຫາກວ່າທ່ານຢູ່ໃນເງື່ອນໄຂຂໍໄດ້ (ເບິ່ງຢູ່ໜ້າ 5).
- ☐ ຈັດເບິ່ງວ່າໃຜຈະດູແລລູກທ່ານໃນເວລາກ່ອນແລະຫຼັງໂຮງຮຽນ. ຂຽນຕື່ມຟອມ ສຳລັບ ບໍລິການ OOSH service ຖ້າຕ້ອງການ (ເບິ່ງຢູ່ໜ້າ 5).

### ບາງຢ່າງທີ່ທ່ານຕ້ອງຊື້ສຳລັບໂຮງຮຽນ

- ☐ ຊຸດນັກຮຽນ (ສຳລັບຍາມຮ້ອນ, ຍາມໜາວ, ກິລາ).
- ☐ ໝວກກັນແດດ (ທັມມະດາເປັນສ່ວນນຶ່ງຂອງຊຸດນັກຮຽນ).
- ☐ ເກີບສຳລັບໄປໂຮງຮຽນ ແລະ ເກີບກິລາ (ລອງໃຊ້ ແບບສຸບຖ້າພວກເຂົາຜູກສາຍເກີບບໍ່ເປັນ).
- ☐ ເປ້ພາຍຢູ່ຫຼັງ (ອາດຈະມີຂາຍຢູ່ໂຮງຮຽນ).
- ☐ ກ່ອງໃສ່ອາຫານທ່ຽງ (ໃຫ້ລູກທ່ານເລືອກເອົາອັນທີ່ພວກເຂົາເປີດເອງໄດ້).
- ☐ ແກ້ວໃສ່ນ້ຳດື່ມ.
- ☐ ເສື້ອກັນຝົນ.
- ☐ ເສື້ອສຳລັບໃສ່ທາສີ (ເສື້ອຍືດເກົ່າກໍໄດ້).
- ☐ ຖົງໃສ່ໜັງສືຫ້ອງສມຸດ.

## ວັນທີຂອງເທີມຮຽນ

ໃນແຕ່ລະປີ ໂຮງຮຽນຈະມີສີ່ເທີມ ແລະເປີດເປັນສອງພາກ ຊຶ່ງແຕ່ລະພາກແມ່ນຫົກເດືອນ. ທັມມະດາແລ້ວ ນັກຮຽນ Kindergarten ເລີ້ມເຂົ້າຮຽນນຶ່ງມື້ຫຼັງຈາກນັກຮຽນຄົນອື່ນໆໃນໂຮງຮຽນເຂົ້າແລ້ວ ແລະ ນັກຮຽນແຕ່ລະຄົນໃນ Kindergarten ເລີ້ມເຂົ້າຮຽນໃນເວລາຕ່າງໆກັນເພື່ອວ່ານາຍຄຣູຈະສາມາດໃຊ້ເວລາກັບເດັກແຕ່ລະຄົນ. ໂຮງຮຽນຂອງທ່ານຈະບອກໃຫ້ທ່ານຊາບ.

ທ່ານສາມາດເບິ່ງວັນທີອັນແນ່ນອນຂອງແຕ່ລະເທີມໄດ້ຕາມເວັບໄຊຕ໌ທີ່ຢູ່ຂ້າງລຸ່ມນີ້:

**http://www.schools.nsw.edu.au/calendar/**

* ວັນທີທີ່ໂຮງຮຽນເລີ້ມເຂົ້າອາດຈະຊ້າກວ່າກັນຢູ່ຕາມໂຮງຮຽນຕາມພາກຕະເວັນຕົກຂອງຣັດ NSW. ຈົ່ງກວດເບິ່ງການປ່ຽນແປງນັ້ນກັບທາງໂຮງຮຽນຂອງທ່ານ.

** ຈົ່ງສອບຖາມເບິ່ງກັບໂຮງຮຽນຂອງທ່ານໃນການປ່ຽນແປງຕ່າງໆ.

## ປີທີ່ລູກທ່ານເລີ້ມເຂົ້າໂຮງຮຽນ

- ☐ ເດືອນ ມົກຣາ - ທ່ານອາດຈະຢາກໃຊ້ບາງເວລາໃນແຕ່ລະມື້ຢູ່ກັບລູກທ່ານເພື່ອຝຶກຫັດບັນດາສິ່ງທີ່ລູກທ່ານຈະຕ້ອງເຮັດໃນເວລາທີ່ພວກເຂົາເຂົ້າໂຮງຮຽນ ເຊັ່ນ ການແຕ້ມຮູບ.
- ☐ ຂຽນຊື່ລູກທ່ານໃສ່ໃນສິ່ງຂອງທຸກໆຢ່າງ!
- ☐ ຈົ່ງໃຫ້ແນ່ໃຈວ່າທ່ານມີເບີໂທຣະສັບຂອງໂຮງຮຽນ.
- ☐ ສອນລູກຊາຍທ່ານໃຫ້ໃຊ້ບ່ອນຖ່າຍປັສວະຖ້າຫາກວ່າເຂົາຍັງບໍ່ທັນຮູ້ຈັກໃຊ້ເທື່ອ.

### ຄືນກ່ອນມື້ຈະເລີ້ມເຂົ້າໂຮງຮຽນມື້ທຳອິດ

- ☐ ຈົ່ງເອົາເຄື່ອງນຸ່ງ ເກີບ ແລະ ຖົງເທົ້າ ຂອງລູກທ່ານອອກມາວາງໄວ້.
- ☐ ທ່ານອາດຈະຢາກກຽມອາຫານທ່ຽງໃຫ້ລູກທ່ານຕັ້ງແຕ່ຕອນກາງຄືນແລ້ວເກັບໄວ້ໃນຕູ້ເຢັນ.
- ☐ ຊ່ວຍລູກທ່ານກຽມກະເປົ໋າຮຽນ.
- ☐ ກຽມສິ່ງຊ້ອນໃນ ຖົງເທົ້າ ແລະ ເຄື່ອງນຸ່ງໃສ່ໄວ້ໃນຖົງປລາສຕິກເພື່ອໄວ້ປ່ຽນ. ບອກໃຫ້ລູກທ່ານຮູ້ວ່າສິ່ງເຫຼົ່ານີ້ຢູ່ໃນເປ້ຫຼັງຂອງເຂົາເພື່ອວ່າເຂົາອາດຈະຖ່າຍຫຼືຍ່ຽວເຮ່ຍ ຢູ່ໃນໂຮງຮຽນ.

### ມື້ທີນຶ່ງ

- ☐ ຈົ່ງມີຄວາມໝັ້ນໃຈແລະມ່ວນຊື່ນໃນມື້ທີນຶ່ງກັບລູກທ່ານ.
- ☐ ໃຫ້ລູກທ່ານນຸ່ງເຄື່ອງດ້ວຍຕົນເອງໃຫ້ໄດ້ຫຼາຍເທົ່າທີ່ຫຼາຍໄດ້.
- ☐ ຈົ່ງມັດຜົມຍາວໄວ້ ຫຼື ເປັຍຜົມ.
- ☐ ທາຄຣີມກັນແດດໃຫ້ລູກທ່ານໃນທຸກໆເຊົ້າ. ພວກເຂົາຕ້ອງໃສ່ໝວກໂຮງຮຽນຂອງພວກເຂົາທຸກໆເວລາທີ່ພວກເຂົາອອກໄປນອກຫ້ອງຮຽນ.
- ☐ ຈົ່ງຖ່າຍຮູບໄວ້!

### ສອງສາມອາທິດທຳອິດຂອງໂຮງຮຽນ

- ☐ ໂຮງຮຽນຈະແຈ້ງໃຫ້ທ່ານຊາບເມື່ອເວລາທີ່ທ່ານຕ້ອງກຽມສິ່ງຂອງສຳລັບກິຈກັມຕ່າງໆ ເຊັ່ນ ກິລາ ສິລປະ ຫຼື ຫ້ອງສມຸດ.
- ☐ ບັນດາເດັກນ້ອຍຈະຮູ້ສຶກເມື່ອຍຫຼາຍໃນສອງສາມອາທິດທຳອິດຂອງໂຮງຮຽນ. ລູກທ່ານຕ້ອງການນອນໃຫ້ຫຼາຍໆ.
- ☐ ຈົ່ງເອົາອາຫານເຊົ້າທີ່ມີອະນາມັຍດີໃຫ້ລູກທ່ານກິນເພື່ອຈະເຮັດໃຫ້ພວກເຂົາຢູ່ໄດ້ຕລອດມື້.
- ☐ ຈົ່ງໃຫ້ແນ່ໃຈວ່າລູກທ່ານຮູ້ວ່າໃຜຈະເປັນຜູ້ມາຮັບພວກເຂົາໃນແຕ່ລະມື້.
- ☐ ຈົ່ງກວດເບິ່ງກະເປົ໋າໂຮງຮຽນລູກທ່ານທຸກໆຄືນເພື່ອຊອກເບິ່ງຈົດໝາຍນ້ອຍຈາກໂຮງຮຽນ ຫຼື ອາຫານເຫຼືອມາ.
- ☐ ພະຍາຍາມຕັ້ງລະບຽບຕອນເຊົ້າໃຫ້ສມ່ຳສເມີ.
- ☐ ເລີ້ມລະບຽບການອ່ານຢູ່ເຮືອນ.
- ☐ ໂອ້ລົມກັບນາຍຄຣູກ່ຽວກັບການຊ່ວຍຢູ່ໃນຫ້ອງຮຽນຖ້າທ່ານສາມາດເຮັດໄດ້.
- ☐ ຈົ່ງລົມກັບລູກທ່ານກ່ຽວກັບເວລາທີ່ເຂົາຢູ່ໂຮງຮຽນ.
- ☐ ມັນເປັນສິ່ງສຳຄັນທີ່ລູກທ່ານຕ້ອງມີເວລາພັກຜ່ອນຢ່ອນອາຣົມຫຼີ້ນຢູ່ຂ້າງນອກ ແລະ ເຮັດໃນສິ່ງທີ່ພວກເຂົາມັກໃນຕອນທີ່ພວກເຂົາເລີ້ມເຂົ້າໂຮງຮຽນ.



# ນິຕຍະສານພໍ່ແມ່ແລະໂຮງຮຽນ

ນິຕຍະສານທາງອິນເຕີເນັຕ (ezine) ເພື່ອຊ່ວຍບັນດາແມ່ ແລະ ພໍ່ໃນການຊອກຫາຂໍ້ມູນກ່ຽວກັບຊີວິດໃນໂຮງຮຽນ.

ເພື່ອຊອກເອົາຂໍ້ມູນເພີ້ມຕື່ມ ກະຣຸນາ ໄປເບິ່ງທີ່:

**www.schools.nsw.edu.au/ezine**





# ແຟ້ມປະຈຳມື້ຂອງໂຮງຮຽນ

ຊ່ວຍທ່ານຈັດຊີວິດຂອງໂຮງຮຽນແລະເຮືອນ. ເປັນບ່ອນທີ່ສະດວກສຳລັບຂໍ້ມູນທຸກໆຢ່າງຂອງໂຮງຮຽນ.

ເພື່ອຊອກເອົາຂໍ້ມູນເພີ້ມຕື່ມ ຈົ່ງໄປເບິ່ງທີ່:

**www.schools.nsw.edu.au/schooldays**



# ຫ້ອງ Kindergarten

ຫ້ອງຮຽນ Kindergarten ເປັນບ່ອນທີ່ມີຄວາມມ່ວນຊື່ນແລະຕື່ນເຕັ້ນ. ບັນດາເດັກນ້ອຍອາດຈະຫຼິ້ນເກມທົດສອບປັນຍາກັບໝູ່ຂອງພວກເຂົາຢູ່ເທິງພື້ນຫ້ອງ, ຫຼິ້ນຢູ່ໃນເຮືອນນ້ອຍ, ຟັງນາຍຄຣູອ່ານໜັງສື ຫຼື ນັ່ງຢູ່ໂຕະເພື່ອຂຽນຫຼືແຕ້ມຮູບ. ພວກເຂົາຈະຮຽນກ່ຽວກັບເລກ, ຮູບຮ່າງ, ຮູບແບບແລະວິທຍາສາດ, ຮ້ອງເພງ, ໄປຢ້ຽມຢາມຫ້ອງສມຸດ. ໃຊ້ຄອມພິວເຕີ ແລະ ພົວພັນໃນກິຈກັມອື່ນໆອີກຫຼາຍຢ່າງ.



## ລູກທ່ານຈະຮຽນຫຍັງແດ່ຢູ່ໃນໂຮງຮຽນ

ເວລາສ່ວນຫຼາຍຢູ່ໃນ Kindergarten ແມ່ນໃຊ້ໃນການພັທນາທັກສະຂອງເດັກໃນດ້ານການຮຽນຕົວໜັງສື ແລະເລກ. ມີຫົກວິຊາດ້ວຍກັນທີ່ເປັນທີ່ຮູ້ຈັກວ່າເປັນ ກຸນແຈຂອງການຮຽນທີ່ຕ້ອງຮຽນຕລອດໂຮງຮຽນຊັ້ນປະຖົມ.

ວິຊາທັງຫົກມີຄື:

- ພາສາອັງກິດ (English)
- ວິຊາເລກ (Mathematics)
- ວິທຍາສາດ ແລະ ເທັກໂນໂລຍີ (Science and Technology)
- ສິລປະ ປະດິດສ້າງ (Creative Arts)
- ສັງຄົມມະນຸສ ແລະ ສະພາບແວດລ້ອມຂອງມັນ (Human Society and its Environment)
- ການພັທນາ ສ່ວນຕົວ, ອະນາມັຍ ແລະ ການສຶກສາດ້ານຮ່າງກາຍ (Personal Development, Health and Physical Education)

ທ່ານສາມາດຊອກເອົາຂໍ້ມູນເພີ້ມຕື່ມກ່ຽວກັບວ່າລູກທ່ານຈະຮຽນຫຍັງແດ່ ໄດ້ທີ່ເວັບໄຊຕ໌ຂອງ Board of Studies

**www.boardofstudies.nsw.edu.au/parents**

### ການສື່ສານດ້ານເທັກໂນໂລຍີ

NSW Department of Education and Training ມີອິນເຕີເນັຕແລະອີເມລ໌ໃຫ້ລູກທ່ານໃຊ້ເພື່ອປັບປຸງໂອກາດການຮຽນຂອງພວກເຂົາຢູ່ໃນສະພາບແວດລ້ອມທີ່ມີຄວາມປອດພັຍ. ການໃຊ້ການສື່ສານດ້ານເທັກໂນໂລຍີນີ້ໄດ້ຮວມເຂົ້າໃສ່ໃນທຸກໆຫ້ອງຮຽນ.

### Best Start Kindergarten Assessment

ບັນດາເດັກນ້ອຍເຂົ້າ Kindergarten ໂດຍມີທັກສະ ແລະ ປະສົບການທີ່ແຕກຕ່າງກັນ. ວິທີປະເມີນ Best Start Kindergarten Assessment ແມ່ນເຄື່ອງມືຢ່າງນຶ່ງທີ່ຊ່ວຍພວກນາຍຄຣູໃຫ້ຄົ້ນພົບທັກສະຂອງເດັກແຕ່ລະຄົນ ແລະ ດັດແປງການສອນໃຫ້ເໝາະສົມກັບຄວາມຕ້ອງການຂອງເດັກແຕ່ລະຄົນນັ້ນ. ບັນດານາຍຄຣູຈະນັ່ງກັບລູກທ່ານໃນຕອນຕົ້ນປີຂອງໂຮງຮຽນເພື່ອປະເມີນທັກສະຂອງລູກທ່ານໃນດ້ານການຮຽນຕົວໜັງສືໃນຕອນຕົ້ນ ແລະ ການຮຽນເລກໃນຕອນຕົ້ນເພື່ອວ່າພວກເຂົາຈະໄດ້ພັທນາໂຄງການອັນເໝາະສົມໃຫ້ແກ່ລູກທ່ານ. ເພື່ອເອົາຂໍ້ມູນທີ່ແປແລ້ວ ຈົ່ງເບິ່ງ

*Best Start Kindergarten Assessment*
**https://www.det.nsw.edu.au/languagesupport/documents/index_b.htm**

### "ມື້ນີ້ເຈົ້າເຮັດຫຍັງແດ່ຢູ່ໂຮງຮຽນ?"

ຖ້າລູກທ່ານຕອບຄຳຖາມດ້ວຍການເວົ້າວ່າ "ບໍ່ໄດ້ເຮັດຫຍັງ", ຈົ່ງພະຍາຍາມຖາມດ້ວຍຄຳຖາມແບບອື່ນ: "ມື້ນີ້ເຈົ້າຮຽນຄຳໃດແດ່?", "ຕອນພັກກິນເຂົ້າທ່ຽງເຈົ້າຫຼິ້ນກັບໃຜ?", "ມື້ນີ້ເຈົ້າມັກຫຼິ້ນຫຍັງຫຼາຍກວ່າໝູ່?"








# ການຫ່ວງໃຍນັກຮຽນ

ມັນເປັນສິ່ງສຳຄັນທີ່ທ່ານແລະລູກທ່ານຮູ້ວ່າມີໃຜຜູ້ນຶ່ງທີ່ໂຮງຮຽນຖ້າຊ່ວຍພວກເຂົາຢູ່. ຢູ່ໂຮງຮຽນຕ່າງໆຍັງໄດ້ພັທນາໂຄງການທີ່ມີຄວາມສຳເຣັດມາແລ້ວເພື່ອໄວ້ຊ່ວຍອູ້ມຊູບັນດານັກຮຽນແລະຮັກສາພວກເຂົາໃຫ້ປອດໄພ.



## ຮັກສາບັນດາເດັກນ້ອຍໃຫ້ປອດໄພແລະມ່ວນຊື່ນ

ໂຮງຮຽນຂອງທ່ານຈະບອກທ່ານເວລາໃດທີ່ເດີນໂຮງຮຽນຈະມີຄຣູຄວບຄຸມ, ວິທີການມາຮັບ ແລະ ວິທີອື່ນໆທີ່ພວກເຂົາແນ່ໃຈວ່າບັນດາເດັກນ້ອຍໄດ້ຮັບການດູແລຕລອດເວລາ.

**ນາຍຄຣູ**

ບັນດານາຍຄຣູໃນໂຮງຮຽນຫຼວງໃນຣັດ NSW ໄດ້ຜ່ານການສຶກສາຂັ້ນສູງແລະມີຄວາມຊ່ຽວຊານ. ພວກເຂົາມີຄວາມຮູ້ສຶກໄວຕໍ່ຄວາມຕ້ອງການຂອງເດັກນ້ອຍແລະ ຈະຢູ່ຊ່ວຍແລະແນະນຳພວກເຂົາ. ນາຍຄຣູຂອງລູກທ່ານຈະບອກທ່ານວິທີທີ່ດີທີ່ສຸດໃນການຕິດຕໍ່ກັບພວກເຂົາແລະການຊອກຮູ້ເຖິງຄວາມກ້າວໜ້າຂອງລູກທ່ານ. ຈົ່ງສືບຕໍ່ບອກໃຫ້ນາຍຄຣູຂອງລູກທ່ານໃຫ້ຊາບໃນການປ່ຽນແປງໃດໆໃນຊີວິດລູກທ່ານຊຶ່ງອາດຈະກະທົບກະເທືອນເຖິງໜ້າວຽກຂອງພວກເຂົາຫຼື ຄວາມມ່ວນຊື່ນຂອງໂຮງຮຽນ.

**ຜູ້ໃຫ້ຄຳປຶກສາຫາລືຂອງໂຮງຮຽນ**

ຜູ້ໃຫ້ຄຳປຶກສາຫາລືຂອງໂຮງຮຽນແມ່ນນາຍຄຣູທີ່ມີປະສົບການແລະເປັນຜູ້ທີ່ມີຄຸນວຸດທິໃນດ້ານຈິຕວິທຍາພ້ອມທັງມີປຣິນຍາໃນດ້ານໃຫ້ຄຳປຶກສາຫາລືໃນເລື້ອງໂຮງຮຽນ. ພວກເຂົາສາມາດຊ່ວຍບັນດານັກຮຽນທີ່ມີບັນຫາຢູ່ໃນໂຮງຮຽນຫຼືຢູ່ເຮືອນ. ນອກຈາກນີ້ພວກເຂົາຍັງສາມາດຊ່ວຍຄອບຄົວໃຫ້ໄດ້ຮັບບໍຣິການຕ່າງໆນອກໂຮງຮຽນຖ້າຫາກມີຄວາມຕ້ອງການ. ທັມມະດາແລ້ວ ທ່ານຕ້ອງທຳການນັດໝາຍກັບຜູ້ໃຫ້ຄຳປຶກສາຫາລືຂອງໂຮງຮຽນດ້ວຍການໂທຣະສັບໄປຫາໂຮງຮຽນ.

**ສະພາບແວດລ້ອມ ທີ່ຕໍ່ຕ້ານ ການຂົ່ມເຫັງ**

ໂຮງຮຽນຫຼວງທຸກໆແຫ່ງ ປ້ອງກັນການຂົ່ມເຫັງຢ່າງເຂັ້ມແຂງ ໂດຍການມີໂຄງການຕ່າງໆເຊັ່ນ ການອູ້ມຊູໝູ່ເພື່ອນຊຶ່ງຊຸກຍູ້ໃຫ້ມີຄວາມປະພຶດທີ່ເໝາະສົມ, ສ້າງຄວາມເຊື່ອໝັ້ນໃນຕົວເອງ ແລະເຄົາຣົບຕໍ່ຄົນອື່ນ. ໂຮງຮຽນທັງຫຼາຍຍັງມີແຜນການໄວ້ໃຊ້ເພື່ອຮັບມືກັບການຂົ່ມເຫັງ ຫຼື ການກວນ ກັນ ແລະ ພະນັກງານຂອງໂຮງຮຽນກໍໄດ້ຮັບການຝຶກຫັດມາເພື່ອຮັບມືກັບສະພາບການເຫຼົ່ານີ້. ທ່ານສາມາດເອົາສຳເນົາຂອງແຜນການຕໍ່ຕ້ານການຂົ່ມເຫັງຂອງໂຮງຮຽນທ່ານໄດ້ຈາກຫ້ອງການຂອງໂຮງຮຽນ.

**ການດູແລເພີ້ມຕື່ມ**

ບັນດາໂຮງຮຽນຫຼວງມີພະນັກງານຊ່ວຍເຫຼືອອື່ນໆຕາມທີ່ມີຄວາມຕ້ອງການ.

ພະນັກງານເຫຼົ່ານີ້ມີຄື:

- ນາຍຄຣູຊ່ວຍສຳລັບບັນດານັກຮຽນທີ່ມີບັນຫາດ້ານການຮຽນ
- ນາຍຄຣູສອນພາສາອັງກິດເປັນພາສາທີສອງ (English as a second language – ESL)
- ເຈົ້າໜ້າທີ່ໃຫ້ຂໍ້ມູນແກ່ຊຸມຊົນແລະປະສານງານ
- ເຈົ້າໜ້າທີ່ ການສຶກສາຊາວອາບໍຣິຈິໂນລ.





ຖ້າທ່ານສັງເກດເຫັນການປ່ຽນແປງໃນການປະພຶດຂອງລູກທ່ານ ຫຼື ທ່ານມີຄວາມກັງວົນໃດໆກ່ຽວກັບລູກທ່ານແລະການຮຽນຂອງເຂົາ ທ່ານສາມາດໂອ້ລົມກັບນາຍຄຣູຂອງລູກທ່ານ, ຜູ້ໃຫ້ຄຳປຶກສາຫາລືຂອງໂຮງຮຽນ ຫຼື ທ່ານຄຣູໃຫຍ່. ມັນເປັນສິ່ງທີ່ດີທີ່ສຸດໃນການຍົກເອົາຄວາມກັງວົນຂຶ້ນມາເວົ້າແຕ່ຕົ້ນເທົ່າທີ່ເປັນໄດ້.



# ເຮັດວຽກຮ່ວມກັນເປັນທີມ - ລູກທ່ານ, ທ່ານເອງ ແລະ ໂຮງຮຽນ

ບັນດາເດັກນ້ອຍມັກຢາກເຫັນພໍ່ແມ່ແລະຜູ້ປົກຄອງຂອງພວກເຂົາຢູ່ໂຮງຮຽນ ບໍ່ວ່າຈະເປັນການຊ່ວຍຢູ່ໃນຫ້ອງຮຽນ, ໂຮງອາຫານ ຫຼືພົວພັນໃນດ້ານອື່ນໆ. ການຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າບັນດານັກຮຽນຮຽນດີຂຶ້ນຢູ່ໃນໂຮງຮຽນໃນເມື່ອພໍ່ແມ່ຫຼືຜູ້ປົກຄອງຂອງພວກເຂົາມີຄວາມສົນໃຈໃນວຽກໂຮງຮຽນຂອງພວກເຂົາ. ການຊ່ວຍເຫຼືອຂອງທ່ານມີຄຸນຄ່າທີ່ສຸດ.



## ຈົ່ງເຂົ້າພົວພັນກັບໂຮງຮຽນຂອງລູກທ່ານ

ວິທີທາງທີ່ທ່ານສາມາດເຂົ້າພົວພັນ:

- ຊ່ວຍຢູ່ໃນຫ້ອງຮຽນ
- ຟັງພວກເດັກນ້ອຍອ່ານໜັງສື
- ຊ່ວຍພວກເດັກນ້ອຍຢູ່ຄອມພິວເຕີ
- ຊ່ວຍໃນການໄປທັສນະສຶກສາຂອງໂຮງຮຽນ
- ຊ່ວຍບໍຣິການຢູ່ໃນໂຮງອາຫານ
- ຝຶກສອນທີມກິລາ.

**ເຂົ້າຮ່ວມໃນຄນະກັມມະການ**

- ຄນະກັມມະການຂອງພໍ່ແມ່ແລະພົລເມືອງ (The Parents and Citizens' Association – P&C) ຢູ່ຕາມແຕ່ລະໂຮງຮຽນພົວພັນກັບການຕັດສິນໃຈກ່ຽວກັບໂຮງຮຽນແລະການໃຊ້ຈ່າຍເງິນຂອງໂຮງຮຽນ. ຖ້າທ່ານບໍ່ສາມາດເຂົ້າພົວພັນກັບການປະຊຸມ ທ່ານກໍສມາດພົວພັນກັບຫຼາຍຢ່າງທີ່ພວກເຂົາຈັດສຳລັບໂຮງຮຽນ ເຊັ່ນ ການສະແດງຕ່າງໆ ແລະການຫາລາຍໄດ້.
- ສະພາໂຮງຮຽນ (School Councils) ປະກອບດ້ວຍ ພໍ່ແມ່, ນາຍຄຣູ ທ່ານຄຣູໃຫຍ່ ແລະຜູ້ຕ່າງໜ້າຈາກຊຸມຊົນທ້ອງຖິ່ນ. ພວກເຂົາມີບົດບາດສຳຄັນໃນການເຮັດໃຫ້ແນ່ໃຈວ່າຊຸມຊົນໂຮງຮຽນທັງໝົດພົວພັນໃນການຕັດສິນໃຈອັນສຳຄັນກ່ຽວກັບໂຮງຮຽນ.
- ກຸ່ມ ປຶກສາຫາລື ແລະ ການສຶກສາຊາວອາບໍຣິຈິໂນລ (Aboriginal Education and Consultative Groups – AECG) ໃຫ້ແນ່ໃຈວ່າບັນດາຊຸມຊົນໄດ້ປະກອບສ່ວນອອກຄວາມຄິດເຫັນໃນການສຶກສາຂອງຊາວອາບໍຣິຈິໂນລ ແລະບັນຫາອື່ນໆທີ່ກ່ຽວພັນໃນຂັ້ນທ້ອງຖິ່ນ.
- ສະມາຄົມ ເດັກ ແລະ ພໍ່ແມ່ທີ່ຢູ່ໂດດດ່ຽວ (Isolated Children's Parents' Association) ຊອກຫາການປັບປຸງໂອກາດການສຶກສາສຳລັບບັນດາເດັກທີ່ຢູ່ໃນເຂດຊົນນະບົດ.



## ການຕຽມຕົວ

ທ່ານຈະໄດ້ເຫັນວ່າໃນເມື່ອລູກທ່ານໄດ້ເລີ້ມເຂົ້າໂຮງຮຽນແລ້ວນັ້ນ ຈະມີຈົດໝາຍນ້ອຍຫຼາຍອັນພ້ອມທັງໜັງສືຂ່າວສານຈາກໂຮງຮຽນມາຫາທ່ານ. ມັນເປັນຄວາມຄິດທີ່ດີໃນການເລີ້ມຈັດໃຫ້ມີແຟ້ມອັນນຶ່ງເພື່ອເປັນຈຸດສູນກາງໃນການເກັບມ້ຽນຂໍ້ມູນທີ່ກ່ຽວກັບໂຮງຮຽນທຸກໆຢ່າງໄວ້ ເຊັ່ນຈົດໝາຍນ້ອຍ, ໜັງສືຂ່າວສານ, ລາຍງານ ແລະວຽກໂຮງຮຽນຂອງລູກທ່ານ.

ຖ້າທ່ານສາມາດຫາແຟ້ມໄດ້ ທ່ານກໍຈະສາມາດຈັດເປັນລະບຽບໄດ້ດ້ວຍການໃຊ້ເຄື່ອງມືແລະຊັພຍາກອນທີ່ມີໄວ້ໃຫ້ທີ່:

**www.schools.nsw.edu.au/news/schooldays**

ພິມເອົາໜ້າປົກອອກມາພ້ອມທັງເຈັ້ຍແບ່ງພາກສ່ວນ ເຮັດໃຫ້ເປັນແຟ້ມທີ່ງາມ. ທ່ານຈະເຫັນວ່າປະຕິທິນນັ້ນຊ່ວຍທ່ານເກັບຂໍ້ຄວາມຂອງການພົວພັນແລະການນັດໝາຍກັບໂຮງຮຽນຂອງທ່ານ, ເປັນບ່ອນເກັບລາຍລະອຽດການຕິດຕໍ່ກັບໂຮງຮຽນ ພອມທັງເຈັ້ຍຂໍ້ມູນແລະຊັພຍາກອນເພື່ອຊ່ວຍລູກທ່ານໃນວຽກໂຮງຮຽນຂອງພວກເຂົາ.



# ໄປຮຽນໜັງສືໂດຍມີສຸຂພາບແຂງແຮງ

ລູກທ່ານຕ້ອງການອາຫານທີ່ມີຄຸນຄ່າເພື່ອມີພລັງງານແລະການຕັ້ງໃຈໃນໂຮງຮຽນ. ອາຫານທີ່ລູກທ່ານກິນໃນຕອນເຊົ້າຈະຕ້ອງເຮັດໃຫ້ພວກເຂົາຢູ່ໄດ້ຕລອດເຊົ້າຈົນກວ່າຈະເຖິງເວລາພັກຫຼິ້ນ ແລະ ພວກເຂົາກໍຈະຕ້ອງມີອາຫານທີ່ມີຄຸນຄ່າສຳລັບຍາມພັກຫຼິ້ນແລະພັກກິນທ່ຽງເພື່ອຈະເຮັດໃຫ້ພວກເຂົາຢູ່ໄດ້ຕລອດມື້ຮຽນ.



## ການກິນເຂົ້າຢູ່ໂຮງຮຽນ

ການກິນເຂົ້າຢູ່ໂຮງຮຽນຈະເປັນປະສົບການອັນແປກຕ່າງສຳລັບລູກທ່ານຖ້າປຽບທຽບກັບການກິນເຂົ້າຢູ່ເຮືອນແລະຢູ່ຊັ້ນຕຽມອະນຸບານ. ບໍ່ມີບ່ອນເກັບຮັກສາອາຫານໃຫ້ຮ້ອນຫຼືເປັນ. ບັນດາເດັກນ້ອຍຈະນັ່ງຢູ່ເທິງເດີ່ນຫຍ້າ ຫຼືຕັ່ງຍາວແລະເອົາອາຫານໃສ່ເທິງເຂົ່າຂອງພວກເຂົາ. ພວກເຂົາຍັງຈະຕ້ອງສາມາດເປີດຫໍ່ອາຫານທີ່ພວກເຂົາຖືມານັ້ນ ໄດ້ດ້ວຍຕົນເອງ ແລະ ພວກເຂົາຈະບໍ່ຢາກໃຊ້ເວລາຫຼາຍໃນການກິນເພາະຢ້ານເສັຍເວລາຫຼິ້ນ.

**ຄຳແນະນຳເພື່ອຊ່ວຍລູກທ່ານ**

- ກຽມອາຫານທີ່ເປີດອອກງ່າຍ ກິນງ່າຍ ແລະ ບໍ່ເປື້ອນ.
- ຂຽນຊື່ຂອງພວກເຂົາໃສ່ຢູ່ເທິງກ່ອງອາຫານ ແກ້ວນ້ຳ ແລະ ກ່ອງອື່ນໆ.
- ເອົາແກ້ວນ້ຳທີ່ແຊ່ງເປັນນ້ຳກ້ອນໃສ່ໄປເພື່ອມັນຈະສາມາດເກັບຮັກສາອາຫານໃຫ້ເຢັນ. ຈົ່ງຫໍ່ແກ້ວນ້ຳນັ້ນດ້ວຍຜ້າເຊັດຈາກເພື່ອກັນມັນໄຫຼຍ້ອຍ.
- ຈົ່ງໃຊ້ກ່ອງອາຫານແບບສາມາດຮັກສາຄວາມຮ້ອນຫຼືຖົງທີ່ຮັກສາຄວາມເຢັນໄດ້.
- ຫຼີກລ່ຽງການໃຊ້ປລາສຕິກຫໍ່ເພາະວ່າພວກເດັກນ້ອຍດຶງອອກຈາກກັນໄດ້ຍາກ.
- ເອົາເຈ້ຍທິຊຊູ ຫຼື ເຈ້ຍຫໍ່ໝາກໄມ້ເພື່ອມັນຈະບໍ່ຊ້ຳ.
- ຈົ່ງເຕືອນລູກທ່ານໃຫ້ລ້າງມືກ່ອນກິນອາຫານ ແລະ ໄປໃຊ້ຫ້ອງນ້ຳໃນເວລາພັກຫຼິ້ນ ແລະ ພັກກິນເຂົ້າທ່ຽງ.
- ຖ້າທ່ານກຽມອາຫານທ່ຽງໄວ້ແຕ່ຄືນກ່ອນ ຈົ່ງເກັບໄວ້ໃນຕູ້ເຢັນຈົນກວ່າຈະເຖິງເວລາໄປໂຮງຮຽນ.
- ກຽມແກ້ວນ້ຳໃຫ້ລູກທ່ານທຸກໆມື້ ແລະ ເຕືອນພວກເຂົາວ່າພວກເຂົາສາມາດເອົານ້ຳຕື່ມໄດ້ຕລອດມື້ຈາກກອັກນ້ຳ ຫຼື ບ່ອນກົດນ້ຳ.

**ຄຳແນະນຳ ກ່ຽວກັບຍາມເລີກຫຼິ້ນ ແລະ ເລີກກິນເຂົ້າທ່ຽງ**

- ປາດໝາກໄມ້ເປັນປ່ຽງ (ບີບໝາວນາວໃສ່ໝາກແອັບເປີ້ນ ໝາກແພຣ໌ ຫຼື ໝາກກ້ວຍໜ້ອຍນຶ່ງເພື່ອບໍ່ໃຫ້ມັນກາຍເປັນສີເຫຼືອງ) ແລະເອົາໃສ່ໃນກ່ອງນ້ອຍ.
- ຕັດພວກຜັກຕ່າງໆເຊັ່ນ ແຄຣັອຕ, ເຊເລຣີ ແລະ ໝາກແຕງ ແລະເອົາໃສ່ໃນຖົງປລາສຕິກທີ່ຕິດແລະເປີດໄດ້. ເອົາເຄື່ອງຈິ້ມ ຫຼື ນົມສົ້ມເພື່ອຈິ້ມກັບແຄຣັອຕໃສ່ໃນກ່ອງນ້ອຍໆຕ່າງຫາກ.
- ເຮັດຂນົມມັຟຟິນດ້ວຍແປ້ງໂຮລມິລແລະເຮັດໃຫ້ແຂງເປັນນ້ຳກ້ອນໄວ້. ຈົ່ງເອົາຂນົມມັຟຟິນສຳລັບຍາມພັກຫຼິ້ນທຸກໆມື້ ຫຼື ເອົາໄວ້ໃຫ້ກິນເປັນອາຫານຫວ່າງຢູ່ເຮືອນໃນເວລາບ່າຍ.
- ໝາກກ້ຽງ ຫຼື ໝາກນັດແຊ່ແຂງເປັນສິ່ງທີ່ເຮັດໃຫ້ສົດຊື່ນໄດ້ດີໃນຍາຮ້ອນ.
- ຈົ່ງທົດລອງໃຊ້ເຂົ້າຈີ່ຫຼາຍໆຢ່າງ ເຊັ່ນ ເຂົ້າຈີ່ເປັນກ້ອນ, ປີຕາ, ໂຮລເກຣນ ຫຼື ເຂົ້າຈີ່ຕ໊ອກຕີລາແບບເປັນແຜ່ນຫໍ່.
- ຖ້າທ່ານນຳໃຊ້ໝາກເລັ່ນ ຈົ່ງຕັດເປັນຕ່ອນບາງໆ ແລະ ເອົາໃສ່ຢູ່ລະຫວ່າງກາງຂອງໃສ່ແຊນວິສຢ່າງອື່ນໆເພື່ອກັນບໍ່ໃຫ້ມັນປຽກແລະອ່ອນ.
- ເຮັດອາຫານໃຫ້ຫຼາຍຂຶ້ນແລະເກັບເອົາໄວ້ສຳລັບເປັນອາຫານທ່ຽງໃນມື້ຕໍ່ມາ. ກີຊ, ປີຊຊາ, ຜັກຊຸບແປ້ງ, ຜັກອົບ ສລັດເສັ້ນໝີ່ ຫຼື ໃສ້ກອກກໍອາດນຳມາໃຊ້ໄດ້.

## ເມື່ອລູກຖືອາຫານທ່ຽງກັບມາເຮືອນຄືນ

ຈົ່ງຢ່າກັງວົນຈົນເກີນໄປຖ້າລູກທ່ານບໍ່ກິນເຂົ້າທ່ຽງໃນຕອນຕົ້ນໆ. ບາງຄັ້ງພວກເດັກນ້ອຍອາດຈະຕື່ນເຕັ້ນເກີນໄປ ຫຼື ຫຍຸ້ງໃນການຫຼິ້ນກັບໝູ່ຫຼາຍເກີນໄປໃນເວລາກິນເຂົ້າແລະບໍ່ໄດ້ກິນອາຫານຂອງຕົນໃຫ້ໝົດ.

ຖ້າລູກທ່ານຫິວຫຼາຍຫຼັງຈາກກັບມາຈາກໂຮງຮຽນທ່ານຄວນຈະເຕືອນພວກເຂົາກ່ຽວກັບເລື້ອງກິນອາຫານທ່ຽງຂອງພວກເຂົາ. ການລື້ງກິນເຂົ້າຂອງລູກທ່ານກໍຈະເຂົ້າລະບຽບໄດ້ໃນທີ່ສຸດ.

## ເຫົາ

ມັນເປັນສິ່ງທັມມະດາທີ່ເດັກນ້ອຍໄປໂຮງຮຽນຈະຕິດເຫົາບໍ່ຍາມໃດກໍ່ຍາມນຶ່ງແລະມັນກໍ່ບໍ່ແມ່ນເປັນຍ້ອນຄວາມສະອາດຫຼືຄວາມສົກກະປົກແຕ່ຢ່າງໃດ. ເຫົາສາມາດແຜ່ຜາຍໄດ້ໃນເວລາທີ່ເດັກນ້ອຍມີການສຳພັດກັນຢ່າງໃກ້ຊິດ ແຕ່ວ່າເຫົາບໍ່ສາມາດໃຫ້ອັນຕຣາຍແກ່ສຸຂພາບຂອງເດັກນ້ອຍໄດ້.

### ເພື່ອປ້ອງກັນບໍ່ໃຫ້ລູກທ່ານຕິດເຫົາ :

- ຈົ່ງກວດເບິ່ງຜົມລູກທ່ານຢ່າງສມ່ຳສເມີ
- ຈົ່ງມັດຜົມຍາວໄວ້.

### ຖ້າລູກທ່ານມີເຫົາ:

- ຈົ່ງແກ້ຜົມທີ່ຍຸ່ງຕິດກັນອອກດ້ວຍຫວີແຂ້ວໃຫຍ່ ແລ້ວທາຜົມດ້ວຍຄຣີມບຳຣຸງຜົມສີຂາວຂຸ້ນ ແລະ ໃຊ້ຫວີແຂ້ວຖີ່ຫວີເພື່ອເອົາໂຕເຫົາ ແລະໄຂ່ (nits) ມັນອອກທຸກໆມື້ຈົນກວ່າຈະບໍ່ມີໄຂ່ເຫົາອີກ
- ສືບຕໍ່ການສົ່ງລູກທ່ານໄປໂຮງຮຽນ
- ຈົ່ງແຈ້ງໃຫ້ທາງໂຮງຮຽນຊາບເພື່ອວ່າເຂົາຈະໄດ້ບອກຄົນອື່ນໆໃຫ້ກວດເບິ່ງຜົມລູກພວກເຂົານຳ; ບໍ່ຈຳເປັນຕ້ອງບອກໃຫ້ຄົນອື່ນຮູ້ວ່າເຫົາມາຈາກລູກທ່ານ
- ບາງຄັ້ງ ໂຮງຮຽນກໍຈັດໃຫ້ມີ ມື້ "ການຂ້າໄຂ່ເຫົາ" ເພື່ອຈະກຳຈັດໄຂ່ເຫົາໃຫ້ໝົດສິ້ນໄປໄວໆຈາກໂຮງຮຽນ.

### ເພື່ອຊອກເອົາຂໍ້ມູນເພີ້ມຕື່ມ:

**www.health.nsw.gov.au/publichealth/environment/headlice/**

**ເພື່ອເອົາຂໍ້ມູນທີ່ແປແລ້ວ ຈົ່ງເບິ່ງ**
*Head lice parent information sheet*
**https://www.det.nsw.edu.au/languagesupport/documents/index_h.htm**



## ຈະເຮັດຢ່າງໃດຖ້າລູກທ່ານບໍ່ສະບາຍ?

**ຢູ່ໂຮງຮຽນ**

ຖ້າລູກທ່ານບໍ່ສະບາຍ ຫຼື ໄດ້ຮັບບາດເຈັບຢູ່ໂຮງຮຽນ ທາງໂຮງຮຽນຈະຕິດຕໍ່ທ່ານ ແລະ ຈະຊອກຫາການຊ່ວຍທາງການແພດຖ້າຈຳເປັນ. ຖ້າລູກທ່ານເປັນໄຂ້ພໍປານກາງ ພວກເຂົາກໍຈະຖືກສົ່ງໄປຫ້ອງຄົນເຈັບ ຊຶ່ງຕາມທັມມະດາແລ້ວຈະຢູ່ໃກ້ກັບຫ້ອງການຂອງໂຮງຮຽນ ຊຶ່ງເປັນບ່ອນທີ່ພວກເຂົາສາມາດນອນ ແລະຖືກຄອບຄຸມເບິ່ງອາການ. ທ່ານຈະຖືກເອີ້ນໃຫ້ມາຮັບລູກທ່ານຈາກໂຮງຮຽນຖ້າຫາກພວກເຂົາໄຂ້ໜັກເກີນກວ່າຈະກັບໄປເຂົ້າຫ້ອງຮຽນໄດ້. ດ້ວຍເຫດຜົນນີ້ ທ່ານຄວນມີລາຍລະອຽດການຕິດຕໍ່ອັນປັດຈຸບັນໃຫ້ໂຮງຮຽນສເມີ.

**ຢູ່ເຮືອນ**

ຢ່າໃຫ້ລູກໄປໂຮງຮຽນແລະພາໄປຫານາຍໝໍຖ້າລູກທ່ານມີ:

- ໄຂ້ຄີງຮ້ອນ ເຖິງ 38°C ຫຼື ສູງກວ່າ
- ຮາກ ຫຼື ຖອກທ້ອງ
- ເປັນໄຂ້ຫວັດໜັກ ຫຼື ມີ ອາການໄຂ້ຫວັດໃຫຍ່
- ເປັນຕຸ່ມຜື່ນທີ່ບໍ່ຮູ້ມາຈາກໃສ.

**ການຕິດເຊື້ອໂຣກສາມັນ ບາງຢ່າງ**

ເອົາລູກທ່ານໄວ້ຢູ່ເຮືອນ ແລະ ໄປຫາຄຳແນະນຳຈາກທາງການແພດໂດຍໄວຖ້າລູກທ່ານມີນຶ່ງໃນສິ່ງຕໍ່ລົງໄປນີ້:

- ***ພາກສຸກພາກໃສ:*** ເປັນໄຂ້ໜ້ອຍນຶ່ງ, ນ້ຳມູກຍ້ອຍ ແລະ ຕຸ່ມຜື່ນສີບົວເລີ້ມປະກົດແລະແຕກແລະຕົກສະເກັດ.
- ***ຕາອັກເສບ:*** ຮູ້ສຶກຄັນຕາແລະຕາແດງ ອາດມີນ້ຳໃນຕາ. ໜັງຕາອາດຈະຕິດກັນໃນຍາມນອນ.
- ***ຕຸ່ມພຸພອງ:*** ຕຸ່ມນ້ອຍໆສີແດງແລ້ວປ່ຽນໄປເປັນຕຸ່ມພອງແລະມີນ້ຳໜອງຫຸ້ມ - ຕາມທັມມະດາຈະມີຢູ່ໃບໜ້າ ມື ຫຼື ໜັງຫົວ.
- ***ຂີ້ກາກ:*** ເປັນແຜ່ນນ້ອຍໆມີໜັງລອກແລະມີວົງສີບົວອ້ອມ.

ເພື່ອຊອກເອົາຂໍ້ມູນເພີ້ມຕື່ມ ກ່ຽວກັບການຕິດເຊື້ອໂຣກຕ່າງໆ ຈົ່ງໂທຣະສັບຫາ NSW Health ຕາມໝາຍເລກ (02) 9391 9000 ຫຼື ເປີດເຂົ້າເບິ່ງ **www.health.nsw.gov.au**

**ຄວາມປອດພັຍຈາກແສງແດດ**

ໂຮງຮຽນທັງຫຼາຍພະຍາຍາມປ້ອງກັນບັນດາເດັກນ້ອຍຢູ່ໃນໂຮງຮຽນຈາກ ການກະທົບທີ່ທຳໃຫ້ເສັຍຫາຍຈາກແສງແດດໂດຍການມີບ່ອນຫຼົບແດດໄວ້ໃຫ້ເທົ່າທີ່ໃຫ້ໄດ້ ແລະ ການໃຫ້ມີໝວກເປັນສ່ວນນຶ່ງຂອງຊຸດນັກຮຽນ. ໝວກຂອງລູກທ່ານຕ້ອງເອົາໃສ່ໃນເວລາທີ່ພວກເຂົາຢູ່ເດີ່ນຫຼິ້ນ ຫຼື ບໍ່ດັ່ງນັ້ນ ພວກເຂົາຕ້ອງຫຼິ້ນຢູ່ໃນຮົ່ມ. ບັນດາເດັກນ້ອຍສາມາດໃສ່ແວ່ນຕາກັນແດດຢູ່ໃນໂຮງຮຽນກໍໄດ້ເພື່ອປ້ອງກັນຕາຂອງພວກເຂົາບໍ່ໃຫ້ໄດ້ຮັບຄວາມເສັຍຫາຍຈາກແສງແດດ.

ຢູ່ເຮືອນ ຈົ່ງທາຄຣີມກັນແດດທຸກໆເຊົ້າກ່ອນພວກເຂົາຈະອອກໄປໂຮງຮຽນ ແລະເຮັດໃຫ້ເປັນລະບຽບປະຈຳຂອງພວກເຂົາ.

**ບັນຫາທາງສຸຂພາບ**

ຖ້າລູກທ່ານມີບັນຫາທາງສຸຂພາບ, ມີອາການແພ້, ມີຄວາມສ່ຽງຕໍ່ການແພ້ ຫຼື ຕ້ອງການນຳໃຊ້ຢາທີ່ນາຍໝໍສັ່ງ, ທາງໂຮງຮຽນຕ້ອງໄດ້ຮັບຊາບ. ທັມມະດາແລ້ວ ຂໍ້ມູນນີ້ຈະຕ້ອງເອົາໃຫ້ດັ່ງເປັນສ່ວນນຶ່ງຂອງວິທີຈົດຊື່ເຂົ້າໂຮງຮຽນ ເຖິງຢ່າງໃດກໍຕາມ ມັນກໍເປັນສິ່ງສຳຄັນທີ່ທ່ານຕ້ອງແຈ້ງໃຫ້ທາງໂຮງຮຽນຊາບເຖິງການປ່ຽນແປງໃດໆທີ່ມີຕໍ່ສຸຂພາບຂອງລູກທ່ານ.

**ອາການແພ້ຕ່າງໆ**

ໂຣກພູມແພ້ເປັນປະຕິກິຣິຍາແພ້ທີ່ຮ້າຍແຮງແລະໃນທັນທີຕໍ່ອາຫານ ເຊັ່ນ ໝາກຖົ່ວ ຫຼື ຫອຍ ຫຼື ແມງໄມ້ຕອດ. ຖ້າລູກທ່ານຖືກກວດພົບວ່າມີອາການແພ້ທີ່ຮ້າຍແຮງຕໍ່ອາຫານຢ່າງໃດຢ່າງນຶ່ງ ມັນເປັນສິ່ງສຳຄັນທີ່ທ່ານຕ້ອງແຈ້ງໃຫ້ທ່ານຄຣູໃຫຍ່ຊາບແຕ່ຕົ້ນໆເທົ່າທີ່ເປັນໄດ້ເພື່ອວ່າຈະໄດ້ມີແຜນການວາງອອກເພື່ອຫຼຸດຜ່ອນການເປີດຮັບຕໍ່ສິ່ງທີ່ຮູ້ວ່າແພ້ນັ້ນ. ທ່ານອາດຈະຖືກຂໍໃຫ້ຊ່ວຍຜູ້ຈັດການຫ້ອງອາຫານຂອງໂຮງຮຽນໃນການພິຈາຣະນາເບິ່ງລາຍການອາຫານຂອງຫ້ອງອາຫານເປັນຕົ້ນ.

**www.allergyfacts.org.au**



# ຂໍ້ມູນທີ່ມີປະໂຫຍດ

NSW Department of Education and Training
ໂທລະສັບໝາຍເລກ: (02) 9561 8000
www.det.nsw.edu.au

ຂໍ້ມູນ ຂອງໂຮງຮຽນຫຼວງ ຣັດ NSW
www.schools.nsw.edu.au

ເທັກໂນໂລຢີທີ່ໂຮງຮຽນ ຈົ່ງເບິ່ງ *Click*
www.schools.nsw.edu.au/click

ການແລກປ່ຽນການສອນແລະການຮຽນ
Teaching and learning exchange (TaLe)
ຂໍ້ມູນກ່ຽວກັບການຮຽນ ແລະ ຊັພຍາກອນທີ່ມີປະໂຫຍດສຳລັບ ວຽກໂຮງຮຽນ: ເບິ່ງ *Parents and Community* ທີ່
www.tale.edu.au

ບໍຣິການນາຍພາສາທາງໂທລະສັບ:
ໂທລະສັບໝາຍເລກ: 131 450

Board of Studies
www.boardofstudies.nsw.edu.au/parents

ການຂົນສົ່ງນັກຮຽນ
ໂທລະສັບໝາຍເລກ: 1800 227 774 ຫຼື (02) 9891 8900
www.transport.nsw.gov.au

ຄຳແນະນຳແກ່ພໍ່ແມ່
www.raisingchildren.net.au

ຄຳແນະນຳເລື້ອງອາຫານທ່ຽງຂອງໂຮງຮຽນ ແລະ ການກິນອາຫານທີ່ມີຄຸນຄ່າ
www.healthykids.nsw.gov.au

ຫ້ອງອາຫານທີ່ເສີບອາຫານທີ່ມີຄຸນຄ່າຂອງໂຮງຮຽນ
www.schools.nsw.edu.au/studentsupport/studentwellbeing/schoolcanteen/index.php

ນະໂຍບາຍສວັສດີການຂອງນັກຮຽນ
www.det.nsw.edu.au/policies/student_serv/student_welfare/stude_welf/PD20020052.shtml

ການຕໍ່ຕ້ານການຂົ່ມເຫັງ
www.det.nsw.edu.au/antibullying
www.bullyingnoway.com.au
**ເພື່ອເອົາຂໍ້ມູນທີ່ແປແລ້ວ ຈົ່ງເບິ່ງ**
*Anti-bullying*
https://www.det.nsw.edu.au/languagesupport/documents/index_a.htm

ຄວາມຕ້ອງການພິເສດ
www.schools.nsw.edu.au/studentsupport/programs/lrngdifficulty.php
www.schools.nsw.edu.au/studentsupport/programs/disability.php

Best Start Kindergarten Assessment
**ເພື່ອເອົາຂໍ້ມູນທີ່ແປແລ້ວ ຈົ່ງເບິ່ງ**
*Best Start Kindergarten Assessment*
https://www.det.nsw.edu.au/languagesupport/documents/index_b.htm

ການສຶກສາສຳລັບເດັກທີ່ມີພອນສວັນແລະຄວາມສາມາດພິເສດ
www.curriculumsupport.education.nsw.gov.au/policies/gats/assets/pdf/polsuppparent.pdf

ອາການແພ້ຕ່າງໆ
www.allergyfacts.org.au
www.allergyfacts.org.au/PDF/AnaphylaxisGuidelinesFinal.pdf
**ເພື່ອເອົາຂໍ້ມູນທີ່ແປແລ້ວ ຈົ່ງເບິ່ງ**
*Anaphylaxis*
https://www.det.nsw.edu.au/languagesupport/documents/index_a.htm

ກິລາ ແລະ ການພັກຜ່ອນ ຣັດ NSW
www.dsr.nsw.gov.au

ຄນະກັມມະການຂອງພໍ່ແມ່ແລະພົລເມືອງ
www.pandc.org.au

ກຸ່ມປຶກສາຫາລືການສຶກສາຂອງຊາວອາບໍຣິຈິໂນລ
http://www.aecg.nsw.edu.au/

ການຂໍຄ່າການສຶກສາຄືນຈາກພາສີລາຍໄດ້
www.ato.gov.au/individuals/content.asp?doc=/content/00174278.htm

ເງິນຊ່ວຍການຝາກເດັກ
http://www.centrelink.gov.au/internet/internet.nsf/payments/childcare_benefit.htm

ການຊ່ວຍແລະການອຸ້ມຊູ
ໂທລະສັບສາຍຊ່ວຍເດັກ (Kids Helpline)
ບໍຣິການ ການປຶກສາຫາລືຟຣີທາງໂທລະສັບ ສຳລັບຜູ້ມີອາຍຸ 5 ຫາ 25 ປີ:
ໂທລະສັບໝາຍເລກ: 1800 551 800
www.kidshelpline.com.au



# ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ້ມຕື່ມ ກະຣຸນາຕິດຕໍ່ທາງໂຮງຮຽນຂອງທ່ານ. ຖ້າຫາກທ່ານຕ້ອງການນາຍພາສາເພື່ອມາຊ່ວຍທ່ານ ກະຣຸນາໂທຫາ ບໍຣິການ ນາຍພາສາທາງໂທຣະສັບຕາມໝາຍເລກ **131 450** ແລະ ຂໍເອົານາຍພາສາທີ່ປາກພາສາ ລາວ. ພະນັກງານຮັບສາຍຈະໂທຫາໂຮງຮຽນແລະນາຍພາສາຈະຢູ່ກັບສາຍເພື່ອຊ່ວຍທ່ານໃນການໂອ້ລົມ.  ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.

# ຂໍ້ມູນກ່ຽວກັບໂຮງຮຽນທີ່ແປແລ້ວ

ຈົ່ງຊອກເອົາຂໍ້ມູນກ່ຽວກັບ ໂຮງຮຽນທີ່ແປເປັນຫຼາຍໆພາສາແລ້ວໄດ້ທີ່:
**www.det.nsw.edu.au/languagesupport/index.htm**

© December 2009
NSW Department of Education and Training

GPO Box 33
Sydney NSW 2001
Australia
T (02) 9561 8000
www.det.nsw.edu.au

ISBN  978-1-921084-24-9

NEW SOUTH WALES DEPARTMENT OF EDUCATION AND TRAINING

The National Education Access Licence for Schools (NEALS)